


## ອໍຣິກອນຢືນຢັດຕໍ່ຕ້ານຄວາມ ກຽດຊັງ ແລະອະຄະຕິ.

ຣັຖຂອງພວກເຮົາ ແລະກົດໝາຍຂອງພວກເຮົາ ສະໜັບສະໜູນຄວາມຫຼາກຫຼາຍຂອງຜູ້ຄົນ, ການຍອມຮັບ ແລະມາລະຍາດໃນສັງຄົມ. ຕໍ່ຕ້ານອະຄະຕິ ແລະຄວາມຄິດຜິດໆ, ຄວາມກຽດຊັງຕໍ່ຄົນທີ່ມີຄວາມຫຼາກຫຼາຍທາງເພດ ແລະຄວາມກຽດຊັງຄົນຕ່າງຊາດ. ຕໍ່ຕ້ານຄວາມຮຸນແຮງ ແລະການຂົ່ມຂູ່ທຸກຮູບແບບ.

ພວກເຮົາຢືນຢັດຮ່ວມກັນ. ເພື່ອການຕິດຕາມຂໍ້ມູນທີ່ດີກວ່າ ແລະຮູບແບບໃໝ່ໃນການແບ່ງປັນສິ່ງທີ່ພວກເຮົາໄດ້ຮຽນຮູ້ຈາກເຫດການ. ໃຫ້ການສະໜັບສະໜູນຫຼາຍຂຶ້ນແກ່ບັນດາຜູ້ລອດຊີວິດ. ແລະມີແຫຼ່ງຊັບພະຍາກອນດ້ານການບັງຄັບໃຊ້ກົດໝາຍຫຼາຍຂຶ້ນ. ເພື່ອວ່າພວກເຮົາຈະສາມາດສ້າງຄວາມແຕກຕ່າງໄດ້ຢ່າງແທ້ຈິງ.

ມັນແມ່ນການຢືນຢັດເພື່ອອະນາຄົດຂອງພວກເຮົາ. ດັ່ງນັ້ນ ບໍ່ຄວນມີໃຜຕ້ອງຕົກເປັນຜູ້ຖືກເຄາະຮ້າຍຂອງອາຊະຍາກັມຈາກຄວາມກຽດຊັງ. ບໍ່ວ່າຈະເປັນຊົນຊັ້ນທີ່ໄດ້ຮັບການປົກປ້ອງຂອງເຂົາເຈົ້າ: ເຊື້ອຊາດ, ສາສະໜາ, ສີຜິວ, ຕົວຕົນຍິງຊາຍ, ຄວາມມັກຊອບທາງເພດ, ຄວາມພິການ ຫຼື ຊາດກຳເນີດ. ແລະທຸກຄົນປອດໄພ, ໄດ້ຮັບການຕ້ອນຮັບ, ແລະມີອິດສະຫຼະທີ່ຈະເປັນໃນສິ່ງທີ່ເຂົາເຈົ້າເປັນ.

**ເນື່ອງຈາກພວກເຮົາທຸກຄົນແມ່ນຊາວອໍຣິກອນ. ແລະຢືນຢັດໃນສິ່ງທີ່ພວກເຮົາເຮັດ.**

## ລົມກັບພວກເຮົາ

ບໍ່ວ່າເລື່ອງໄດ້ເກີດຂຶ້ນກັບທ່ານ ຫຼື ກັບໃຜກໍຕາມ, ພວກເຮົາສາມາດຊ່ວຍໄດ້ຢ່າງເຕັມສ່ວນໃນການຕິດຕາມເຫດການທີ່ເກີດຈາກການກຽດຊັງກັນ ແລະອະຄະຕິ.

ສາຍດ່ວນທີ່ບໍ່ແມ່ນເລື່ອງສຸກເສີນ

1-844-924-BIAS (2427)

ມີເຈົ້າໜ້າທີ່ບໍລິການດ້ານບາດແຜທາງໃຈ ໃຫ້ບໍລິການຕັ້ງແຕ່ວັນຈັນ ຫາ ວັນສຸກ, ເວລາ 9 ໂມງເຊົ້າ ຫາ 5 ໂມງແລງ.

ພວກເຮົາຮັບສາຍໂທຣີເລທຸກສາຍ

ບໍລິການແປພາສາຫຼາຍກວ່າ 240 ພາສາ

ຫຼື ທ່ານລາຍງານຕໍ່ພວກເຮົາທາງອອນລາຍໄດ້ຕະຫຼອດເວລາທີ່:

**STANDAGAINSTHATE.OREGON.GOV**

Oregon Dept. of Justice's
Civil Rights Unit
1162 Court St. NE
Salem, OR 97301
503-378-6324
Lao Edition

ອໍຣິກອນ

# ຢືນຢັດ ຕໍ່ຕ້ານ ກຽດຊັງ



ສິ່ງທີ່ທ່ານຈຳເປັນຕ້ອງຮູ້ກ່ຽວກັບກົດໝາຍວ່າດ້ວຍອາຊະຍາກັມຈາກຄວາມກຽດຊັງແລະເຫດການອະຄະຕິ.

STATE OF OREGON · DEPARTMENT OF JUSTICE

ຄວາມກຽດຊັງກັນກຳລັງເພີ່ມຂຶ້ນເລື້ອຍໆ. ບໍ່ແມ່ນສະເພາະໃນອໍຣິກອນເທົ່ານັ້ນ, ແຕ່ທົ່ວປະເທດ, ທີ່ເຫດການອາຊະຍາກັມຈາກຄວາມກຽດຊັງ ແລະອະຄະຕິ ໄດ້ເພີ່ມຂຶ້ນເລື້ອຍໆ. ມັນຕ້ອງຢຸດ.

## ກົດໝາຍຂອງຣັຖອໍຣິກອນ:

ໃນປີ 2019, ຣັຖອໍຣິກອນໄດ້ປັບປຸງກົດໝາຍວ່າດ້ວຍອາຊະຍາກັມຈາກຄວາມກຽດຊັງສະບັບປັດຈຸບັນຂອງຣັຖ ເພື່ອຂະຫຍາຍການປົກປ້ອງຄຸ້ມຄອງ ແລະປັບປຸງລະບົບການລາຍງານ ເພື່ອໃຫ້ທຸກຄົນໃນຣັຖອໍຣິກອນຮູ້ສຶກປອດໄພໃນຊຸມຊົນຂອງຕົນ.

## ອາຊະຍາກັມທີ່ເກີດຈາກອະຄະຕິແມ່ນຫຍັງ?

ໃນຣັຖອໍຣິກອນ, ຊື່ທາງກົດໝາຍສຳລັບອາຊະຍາກັມທີ່ເກີດຈາກຄວາມກຽດຊັງ ກໍແມ່ນ **ອາຊະຍາກັມຈາກອະຄະຕິ (Bias Crime)**. ມັນຜິດກົດໝາຍທີ່ຈະ:

- **ຂົ່ມຂູ່ບຸກຄົນ, ຄອບຄົວຂອງເຂົາ, ຫຼື ຊັບສິນຂອງເຂົາ**
- **ກ້າວກ່າຍ, ລົບກວນ, ຫຼື ທຳລາຍຊັບສິນ**
- **ທຳຮ້າຍ ຫຼື ແຕະຕ້ອງຄົນອື່ນ**
- **ໃຊ້ອາວຸດທຳຮ້າຍຄົນອື່ນ**

ອີງຕາມປັດໃຈທີ່ຊຸກຍູ້ໃຫ້ເກີດອະຄະຕິຈາກການເຫັນ ຫຼື ສະຖານະຕົວຈິງຂອງຊົນຊັ້ນທີ່ໄດ້ຮັບການປົກປ້ອງ.

ອາຊະຍາກັມ + ປັດໃຈຊຸກຍູ້ຈາກອະຄະຕິ = ອາຊະຍາກັມຈາກຄວາມກຽດຊັງ

## ເຫດການອະຄະຕິ: ມັນແມ່ນຫຍັງ?

ໃນຣັຖອໍຣິກອນ, **ເຫດການອະຄະຕິ** ຖືກໃຫ້ຄວາມໝາຍວ່າ ເປັນການສະແດງຄວາມບໍ່ມັກ ຫຼືເປັນສັດຕູ ຊຶ່ງອາດມີປັດໃຈຊຸກຍູ້ຈາກການເຫັນ ຫຼື ສະຖານະຕົວຈິງຂອງບຸກຄົນໜຶ່ງໃນດ້ານ **ເຊື້ອຊາດ, ສີຜິວ, ຄວາມພິການ, ສາສະໜາ, ຊາດກຳເນີດ, ຄວາມມັກຊອບທາງເພດ ຫຼື ຕົວຕົນຍິງຊາຍ**. ອະຄະຕິອາດຢູ່ໃນຮູບແບບການສະແດງອອກທາງວາຈາ, ທາງຮ່າງກາຍ, ຫຼື ທາງສາຍຕາ.

ຕົວຢ່າງຂອງເຫດການອະຄະຕິທົ່ວໄປ ໄດ້ແກ່:

- **ການໃຊ້ຄຳໝິ່ນປະມາດໃນເລື່ອງເຊື້ອຊາດ, ຊົນເຜົ່າ, ຄວາມຫຼາກຫຼາຍທາງເພດ, ຫຼື ຄົນຂ້າມເພດ**
- **ພົ່ນຄຳເວົ້າທີ່ສ້າງຄວາມກຽດຊັງ**
- **ເຍາະເຍີ້ຍຄົນທີ່ພິການທາງຮ່າງກາຍ ຫຼື ຈິດໃຈ**
- **"ເວົ້າຕະຫຼົກ" ທີ່ເຮັດໃຫ້ບໍ່ພໍໃຈ**
- **ບອກຄົນໃດໜຶ່ງວ່າ ເຂົາເຈົ້າບໍ່ແມ່ນຄົນຂອງປະເທດນີ້**

ເຖິງວ່າ ເຫດການອະຄະຕິຈະບໍ່ແມ່ນອາຊະຍາກັມ, ແຕ່ວ່າ ມັນອາດເປັນການລະເມີດສິດທິພົນລະເມືອງ ແລະຄວນຖືກລາຍງານ.

## ລາຍງານເຫດການ

ສາຍດ່ວນທີ່ເປັນຄວາມລັບແລະບໍລິການທົ່ວຣັຖອໍຣິກອນເພື່ອຮັບມືກັບບັນຫາອະຄະຕິ (Bias Response Hotline) ຊ່ວຍເຮັດໃຫ້ງ່າຍໃນການລາຍງານບັນຫາທັງໝົດທີ່ກ່ຽວຂ້ອງກັບຄວາມກຽດຊັງແລະອະຄະຕິ, ບໍ່ວ່າມັນຈະເກີດຂຶ້ນກັບທ່ານ ຫຼື ໃຜຜູ້ໜຶ່ງກໍຕາມ.

ໂທສາຍດ່ວນທີ່ບໍ່ແມ່ນເລື່ອງສຸກເສີນຂອງພວກເຮົາໄດ້ທີ່ **1-844-924-BIAS (2427)** ເພື່ອປຶກສາກັບຜູ້ໃຫ້ການຊ່ວຍເຫຼືອດ້ານບາດແຜທາງໃຈ.
ວັນຈັນ - ວັນສຸກ ເວລາ 9 ໂມງເຊົ້າ-5 ໂມງແລງ
ຫຼັງເວລາເຮັດວຽກ, ຈະຕິດຕໍ່ກັບຄືນໂດຍທາງຂໍ້ຄວາມ
ພວກເຮົາຮັບສາຍໂທຣີເລທຸກສາຍ
ບໍລິການແປພາສາຫຼາຍກວ່າ 240 ພາສາ

ເບິ່ງທີ່ເວັບໄຊ **StandAgainstHate.Oregon.gov** ເພື່ອລາຍງານຍາມໃດກໍໄດ້.

## ການລາຍງານຄວາມກຽດຊັງ: ເປັນຫຍັງຈຶ່ງລາຍງານ?

ການລາຍງານອາຊະຍາກັມຈາກຄວາມກຽດຊັງ ແລະເຫດການອະຄະຕິ ຈະຊ່ວຍສ້າງຄວາມປອດໄພໃຫ້ແກ່ທຸກຄົນ.

ສາຍດ່ວນຮັບມືອະຄະຕິ (Bias Response Hotline) ມີຮູບແບບທີ່:

- **ສະໜັບສະໜູນຜູ້ລອດຊີວິດ**
- **ສົ່ງຕໍ່ຜູ້ລອດຊີວິດໄປຮັບການບໍລິການຕ່າງໆ ທີ່ສາມາດຊ່ວຍເຫຼືອໄດ້**
- **ຕິດຕາມຂໍ້ມູນ**

